ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 28/ຫກ
ນະຄອນຫຼວງວຽງຈັນ, ວັນທີ: 06 ກໍລະກົດ 2018

ສຳນັກງານ ຄຄຊ
ເລກທີ 0730
ວັນທີ 11 JUL 2018
ໂທລະສັບ 021 217770

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ປະຈຳອາທິດທີ 18-22/06/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,49% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກຍອດຂາຍບ້ານຂອງສະຫະລັດອາເມລິກາ ໃນເດືອນ 05/2018 ຫຼຸດລົງ ຢູ່ໃນລະດັບ 0,4% ຈາກ 2,7% ໃນເດືອນຜ່ານມາ ແລະ ປະຊາຊົນທີ່ຂໍສະຫວັດດີການຕໍ່ເນື່ອງ ໃນອາທິດທີ 09/06/2018 ເພີ່ມຂຶ້ນ ມາເປັນ 1,72 ລ້ານຄົນ ຈາກ 1,70 ລ້ານຄົນ ໃນອາທິດຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 11-15/06/2018 | ອາທິດນີ້ 18-22/06/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1604 | 1,1661 | -0,49% |
| ເຢນ/ໂດລາ | 110,52 | 110,01 | 0,38% |
| ບາດ/ໂດລາ | 32,42 | 32,92 | -1,52% |
| ເປໂຊ/ໂດລາ | 53,36 | 53,21 | 0,29% |
| ຣູເປັຍ/ໂດລາ | 13.925,00 | 14.075,00 | -1,07% |
| ໂດລາສິງກະໂປ/ໂດລາ | 1,3471 | 1,3564 | -0,69% |
| ຢວນ/ໂດລາ | 6,4188 | 6,4940 | -1,16% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນຫຼຸດລົງ 0,87% ຈາກ 65,21 ໂດລາ/ບາເຣວ ມາເປັນ 64,64 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນແອັດຊັງຂອງສະຫະລັດອາເມລິກາ ເພີ່ມຂຶ້ນ 3,27 ລ້ານບາເຣວ ຂອງອາທິດທີ 15/06/2018, ຈາກເພີ່ມຂຶ້ນ 2,27 ລ້ານບາເຣວ ໃນອາທິດຜ່ານມາ;

- ລາຄາຄຳຫຼຸດລົງ 2,22% ຈາກ 1.298,33 ໂດລາ/ອອນ ມາເປັນ 1.269,48 ໂດລາ/ອອນ ເນື່ອງຈາກຄວາມຜັນຜວນຂອງຄ່າເງິນໂດລາ ເຮັດໃຫ້ນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກັບກຳໄລໃນຄ່າເງິນ.

2. ສະພາບການຊື້-ຂາຍອັດຕາແລກປ່ຽນ

2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,62% ແຕ່ແຂງຄ່າຂຶ້ນ 0,99% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 2,14% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 1,67% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 15/06/2018 | | | ອາທິດນີ້ 22/06/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.430,88 | 8.458,33 | 8.442,28 | 8.479,41 | 8.509,50 | 8.494,71 | -0,57% | -0,60% | -0,62% | -2,10% | -2,15% | -2,14% |
| ບາດ | 262,34 | 263,51 | 263,06 | 259,31 | 260,97 | 260,49 | 1,17% | 0,97% | 0,99% | -1,65% | -1,61% | -1,67% |

2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດເພີ່ມຂຶ້ນ 0,77% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 11,14%;

- ປະລິມານເງິນ M2 ຫຼຸດລົງ 0,06% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8,27%.

2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (15-21/06/2018) ເຫັນວ່າ ທທກ ຊື້ເງິນໂດລາສຸດທິ 3,98 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 31,55 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 27,57 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 606,71 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 163 ລ້ານບາດ ແລະ ຂາຍເງິນບາດໄດ້ 769,71 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາ ຫຼຸດລົງ 19,88% ແຕ່ເງິນບາດ ເພີ່ມຂຶ້ນ 32,67%;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາໃຫ້ທະນາຄານທຸລະກິດ ຈຳນວນ 8,92 ລ້ານໂດລາ ແລະ ຂາຍເງິນບາດໃຫ້ທະນາຄານທຸລະກິດ ຈຳນວນ 157,50 ລ້ານບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 1,63 ລ້ານໂດລາ ແລະ ເງິນບາດ ຈຳນວນ 145,70 ລ້ານບາດ;

- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆເຫັນວ່າ: ທຫລ ຂາຍເງິນໂດລາໃຫ້ ຈຳນວນ 35 ລ້ານໂດລາ.

[1]% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 15-21/06/2018 | | ອາທິດນີ້ 15-21/06/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **33,65** | **162,79** | **33,65** | **162,79** | **33,64%** | **0,43%** |
| - ທ/ຄທຸລະກິດລັດ | 10,77 | 61,12 | 10,77 | 61,12 | 6,53% | 16,82% |
| - ທ/ຄທຸລະກິດອື່ນໆ | 22,88 | 101,67 | 22,88 | 101,67 | 51,82% | -7,39% |
| **2. ການຂາຍເງິນຕາຕ່າງປະເທດ** | **40,14** | **540,23** | **40,14** | **540,23** | **30,66%** | **-20,88%** |
| - ທ/ຄທຸລະກິດລັດ | 19,23 | 183,35 | 19,23 | 183,35 | -7,90% | -0,73% |
| - ທ/ຄທຸລະກິດອື່ນໆ | 20,91 | 356,88 | 20,91 | 356,88 | 112,50% | -28,35% |
| **ຊື້-ຂາຍສຸດທິ ທທກ** | **-6,49** | **-377,44** | **-6,49** | **-377,44** | **17,15%** | **-27,51%** |
| - ຜິດດ່ຽງຊື້-ຂາຍ | -19,29% | -231,86% | -19,29% | -231,86% | -12,33% | -27,82% |
| **- ມູນຄ່າການຊື້-ຂາຍ** | **73,79** | **703,02** | **73,79** | **703,02** | **32,00%** | **-16,79%** |
| **3. ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ** | **-13,24** | **-46,57** | **-13,24** | **-46,57** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 13,24 | 46,57 | 13,24 | 46,57 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **8,48** | **71,45** | **8,48** | **71,45** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **-10,00** | **0,00** | **-10,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 10,00 | 0,00 | 10,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 06/2018 ຄາດວ່າຈະຢູ່ໃນລະດັບ 2,35% (ຕົວເລກຄາດຄະເນ).

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດເຂົ້າມາ ສປປ ລາວ ໃນອາທິດນີ້ ຫຼຸດລົງ 26,9% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 25,73 ລ້ານໂດລາສະຫະລັດທຽບເທົ່າ. ພ້ອມນີ້ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 5,3% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 38,81 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 933 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 182 ສະບັບ ເທົ່າກັບ 24,23% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 488,50 ຕື້ກີບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 162,43 ຕື້ກີບ ເທົ່າກັບ 49,81%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (15-21/06/2018) ມີທັງໝົດ 4.030 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 3.922 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າຫຼຸດລົງ ຈຳນວນ 76 ຕື້ກີບ ຈາກ 879,49 ຕື້ກີບ ມາເປັນ 803,23 ຕື້ກີບ ເທົ່າກັບ 8,67%;
- **ກະຊວງການເງິນ:** ມີການເຄື່ອນໄຫວຈຳນວນ 108 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າຫຼຸດລົງ ຈຳນວນ 61,12 ຕື້ກີບ ຈາກ 83,83 ຕື້ກີບ ມາເປັນ 22,71 ຕື້ກີບ ເທົ່າກັບ 72,9%.

## 4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 904,30 ຈຸດ ຫຼຸດລົງ ຈາກ 914,95 ຈຸດ ຫຼື ເທົ່າກັບ 1,16% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 1.019.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,72 ຕື້ກີບ ເພີ່ມຂຶ້ນ 57,06% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 75,78% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດການຫຼຸດລົງຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວຫຼຸດລົງຂອງລາຄາຮຸ້ນ LCC, PCD ແລະ EDL-Gen.

➢ ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | | |
|---|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ | ຈຳນວນ | ມູນຄ່າ ການຊື້-ຂາຍ | ລາຄາ ປ່ຽນແປງ (ກີບ) | ລາຄາ ປ່ຽນແປງ (%) |
| **BCEL** | 196.100 | 1.049.310.000 | 5.400 | 287.600 | 1.542.205.000 | 5.400 | 46,66 | 46,97 | - | 0,00 |
| **EDL-GEN** | 437.000 | 1.923.050.000 | 4.400 | 727.300 | 3.171.795.000 | 4.350 | 66,43 | 64,94 | -50 | -1,14 |
| **LWPC** | 2.100 | 15.115.000 | 7.250 | 400 | 3.165.000 | 7.900 | -80,95 | -79,06 | 650 | 8,97 |
| **PTL** | 700 | 1.140.000 | 1.600 | 1.500 | 2.400.000 | 1.600 | 114,29 | 110,53 | - | 0,00 |
| **SVN** | 1.500 | 4.275.000 | 2.850 | - | - | 2.850 | -100,00 | -100,00 | - | 0,00 |
| **PCD** | 1.000 | 1.350.000 | 1.350 | 900 | 1.135.000 | 1.250 | -10,00 | -15,93 | -100 | -7,41 |
| **LCC** | 5.900 | 13.620.000 | 2.400 | 1.500 | 3.375.000 | 2.250 | -74,58 | -75,22 | -150 | -6,25 |
| ທັງໝົດ | 644.300 | 3.007.860.000 | - | 1.019.200 | 4.724.075.000 | - | 58,19 | 57,06 | | |

## 5. ວຽກງານອື່ນໆທີ່ພົ້ນເດັ່ນ.

- **- ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ພິທີຕ່າງໆ:** ❶ ສຳເລັດການນຳສະເໜີຜ່ານຮ່າງກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ VIII, ❷ ກອງປະຊຸມໜ່ວຍງານຄົ້ນຄວ້າປັບປຸງນິຕິກຳທີ່ຮັບໃຊ້ໃນການເຄື່ອນໄຫວວຽກງານວິຊາສະເພາະຂອງຂະແໜງການທະນາຄານ, ❸ ກອງປະຊຸມປຶກສາຫາລືກ່ຽວກັບການເບີກຈ່າຍເງິນເດືອນ ແລະ ວຽກງານທັນເປັນທັນສະໄໝໃນການເກັບລາຍຮັບ, ❹ ກອງປະຊຸມໂຄສະນາເຜີຍແຜ່ວຽກງານຕະຫຼາດທຶນ ໃຫ້ຄະນະກວດກາສູນກາງພັກໃນຫົວຂໍ້ "ຄວາມເຂົ້າໃຈພື້ນຖານກ່ຽວກັບການລົງທຶນໃນຮຸ້ນ", ❺ ກອງປະຊຸມທົບທວນຄືນການສ້າງຄວາມເຂັ້ມແຂງກ່ຽວກັບການຕ້ານອາຊະຍາກຳຂ້າມຊາດ ແບບມີການຈັດຕັ້ງໂດຍສະເພາະການຟອກເງິນ ຮ່ວມກັບສະຖາບັນຊ່ວຍເຫຼືອລ້າດ້ານກົດໝາຍ ແລະ ວິຊາການ, ❻ ກອງປະຊຸມປຶກສາຫາລືກ່ຽວກັບການຮ່າງຂໍ້ຕົກລົງວ່າດ້ວຍການບໍລິການດ້ານການເງິນຜ່ານໂທລະສັບມືຖື ແລະ ❼ ສຳເລັດການເຜີຍແຜ່ວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢູ່ພາກເໜືອ ແລະ ພາກໃຕ້.

**III. ແຜນວຽກຈຸດສຸມອາທິດຕໍ່ໄປ:**

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ຢ່າງໃກ້ຊິດ;
- **ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນ 06/2018, ❷ ກອງປະຊຸມປຶກສາຫາລືກ່ຽວກັບ Lao Digital Forum ຄັ້ງທີ II ຮ່ວມກັບເອກອັກຄະລັດຖະທູດສະຫະລັດອາເມຣິກາ, ❸ ກອງປະຊຸມປຶກສາຫາລືກ່ຽວກັບຮ່າງດຳລັດວ່າດ້ວຍທຸລະກິດເຊົ່າສິນເຊື່ອ, ❹ ກອງປະຊຸມທົບທວນຄືນກ່ຽວກັບການຈັດຕັ້ງປະຕິບັດວຽກງານການນຳໃຊ້ບັນດາທະນາຄານຮ່ວມກັນໃນ ສປປ ລາວ ປະຈຳ 06 ເດືອນຕົ້ນປີ 2018, ❺ ກອງປະຊຸມເຜີຍແຜ່ວຽກງານກ່ຽວກັບລະບົບການໂອນເງິນແບບທັນທີ (RTGS) ແລະ ❻ ກອງປະຊຸມໂຄສະນາເຜີຍແຜ່ໂຄສະນາເຜີຍແຜ່ວຽກງານຕະຫຼາດທຶນ ໃຫ້ພະນັກງານ ທຫລ ພາກໃຕ້ ແຂວງຈຳປາສັກ ໃນຫົວຂໍ້ "ຄວາມເຂົ້າໃຈພື້ນຖານກ່ຽວກັບການລົງທຶນໃນຮຸ້ນ";
- ທ່ານຜູ້ວ່າການ ທຫລ ພ້ອມດ້ວຍຄະນະກະກຽມເດີນທາງໄປເຄື່ອນໄຫວວຽກທາງລັດຖະການ ຢູ່ 04 ແຂວງພາກໃຕ້;
- ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບຄະນະຜູ້ວ່າການ ທຫລ ຈາກຊ່ຽວຊານໂຄງການຮ່ວມມືແລກປ່ຽນຄວາມຮູ້ທາງດ້ານວິຊາການຂອງ ທະນາຄານາ ສ. ເກົາຫຼີ.

ລ.ຫົວໜ້າຫ້ອງການ

ສຸກັນ ຈັນທະວົງ